## ຄວາມປອດໄພກັບແກັສໂພຼເພນ

ຖ້າທ່ານສົງສັຍວ່າ ມີແກັສກຳລັງຮົ່ວໃນເຮືອນເຄື່ອນທີ່ຂອງທ່ານ, ຢ່າຊອກຫາບ່ອນຮົ່ວໂດຍຕົນເອງ. ໃຫ້ໜີຈາກທີ່ນັ້ນທັນທີໂດຍຖິ້ມປະຕູເປີດໄວ້ ແລ້ວ, ຈາກພາຍນອກເຮືອນເຄື່ອນທີ່ນັ້ນ, ໃຫ້ໂທຫາ 911 ຫລືກອງດັບເພີງປະຈຳເຂດຂອງທ່ານເພື່ອແຈ້ງການຮົ່ວນັ້ນ.

ຫາກສົງສັຍວ່າແກັສກຳລັງຮົ່ວ, ຢ່າໃຊ້ງານປຸ່ມຈຸດໄຟຂອງເຕົາ, ແລະຢ່າເປີດຫລືປິດເຄື່ອງໃຊ້ໄຟຟ້າຫລືສວິທໄຟ. ຖ້າທ່ານສາມາດເຮັດຢ່າງປອດພັຍໄດ້, ປິດສາຍແກັສຢູ່ຖັງໂພຼເພນແລະຕັດກຳລັງງານຂອງເຮືອນເຄື່ອນທີ່ຂອງທ່ານກົງເສົາໄຟຫລືສວິທເມນທີ່ມາຈາກເຮືອນຂອງທ່ານ ໃນຂະນະທີ່ທ່ານລໍຖ້າກອງດັບເພີງຢູ່.

**ຂໍ້ແນະນຳອື່ນໆ ເພື່ອຄວາມປອດພັຍກ່ຽວກັບແກັສໂພຼເພນ**

- ໃຫ້ທຳຄວາມແນ່ໃຈສເມີວ່າ ເຮືອນເຄື່ອນທີ່ຂອງທ່ານມີການລະບາຍລົມຢ່າງຖືກຕ້ອງໃນຂະນະທີ່ທ່ານກຳລັງຄົວກິນ.
- ຊອກຫາຈຸດປ່ອຍໄອເສັຽຂອງເຄື່ອງທຳຄວາມຮ້ອນໂພຼເພນຂອງເຮືອນເຄື່ອນທີ່ຂອງທ່ານ (ຖ້າທ່ານຊອກຫາບໍ່ສະດວກ, ໃຫ້ໂທຫາ FEMA) ແລະກວດໃຫ້ດີວ່າສິ່ງໄໝ້ງ່າຍທຸກແນວ ເຊັ່ນ ຜ້າເຊັດ ໄມ້ ຫລືປຸ່ມໄມ້ ແຫ້ງຢູ່ຫ່າງຈາກທີ່ນັ້ນ.
- ເມື່ອທ່ານປ່ຽນໃໝ່ຖັງໂພຼເພນຫລັງຈາກໄດ້ເຕີມແກັສອີກ, ໃຫ້ກວດຫາການຮົ່ວໂດຍສີບັດງບໍລິເວັນເພື່ອຫາກິ່ນຜົນບົ່ວເນົ່າ. ຖ້າທ່ານໄດ້ດົມກິ່ນການຮົ່ວ, ໃຫ້ຕໍ່ສາຍອີກແລະກວດບ່ອນຕໍ່ອີກຄັ້ງນຶ່ງ ແລ້ວໂທຫາສາຍດ່ວນຊ່ວຍເຫລືອເຮືອນເຄື່ອນທີ່ FEMA (888-294-2822) ຫາກການຮົ່ວນັ້ນບໍ່ເຊົາ.
- ກວດຫາການຮົ່ວຂອງແກັສກ່ອນທີ່ຈະຖອດຫລືຕິດສາຍໝໍ້ໄຟຂອງເຮືອນເຄື່ອນທີ່.

**ສາຍດ່ວນຊ່ວຍເຫລືອເຮືອນເຄື່ອນທີ່ FEMA 888-294-2822**

## ຄວາມໝັ້ນຄົງ

- ໃຫ້ສອນລູກຂອງທ່ານວ່າ ສັດລ້ຽງຫລົງທາງທີ່ພົບຕາມລານຈອດເຮືອນເຄື່ອນທີ່ອາດບໍ່ແມ່ນສັດລ້ຽງຄົນໄດ້. ລາວຄວນປະຕິບັດຕໍ່ສັດທຸກຕົວທີ່ບໍ່ມີເຊືອກຜູກດ້ວຍການຖືວ່າເປັນສັດອັນຕລາຍ.
- ຖ້າທ່ານສັງເກດເຫັນການກະທຳຜິດອາຍາພາຍໃນລານຈອດເຮືອນເຄື່ອນທີ່, ໃຫ້ໂທຫາເຈົ້າໜ້າທີ່ປະຈຳທ້ອງຖິ່ນ ຫລືແຈ້ງເຫດໃຫ້ພະນັກງານຮັກສາບໍລິເວັນທີ່ໄດ້ທຳສັນຍາໄວ້ກັບ FEMA ຫລືຜູ້ຈັດການລານຈອດເຮືອນເຄືອນທີ່ຊາບ. ຖ້າທ່ານບໍ່ແຈ້ງເຫດເຊັ່ນນີ້, ການກະທຳຜິດອາຍານັ້ນອາດຈະເພີ່ມຄວາມຮ້າຍແຮງໄດ້.
- ຖ້າຫາກວ່າມີສະລອຍນ້ຳຢູ່ພາຍໃນລານຈອດເຮືອນເຄື່ອນທີ່, ໃຫ້ທຳຄວາມແນ່ນອນວ່າທ່ານເບິ່ງແຍງດູແລລູກຂອງທ່ານຢ່າງໃກ້ຊິດ ແລະສັ່ງສອນບໍ່ໃຫ້ລາວໄປໃຊ້ສາລອຍນ້ຳນັ້ນໂດຍທ່ານບໍ່ໄດ້ໃຫ້ຄວາມເຫັນຊອບ ແລະໂດຍບໍ່ມີຜູ້ໃຫຍ່ເບິ່ງແຍງດູແລເປັນອັນຂາດ.
- ລານຈອດເຮືອນເຄື່ອນທີ່ຍ່ອມມີເດັກນ້ອຍຈຳນວນຫລາຍຢູ່ທົ່ວບໍລິເວັນ. ຈົ່ງຍ່າງອ້ອມດ້ານຫລັງຂອງລົດຂອງທ່ານສເມີ ຈົນໄດ້ກາຍເປັນນິດສັຍ ເພື່ອເບິ່ງວ່າມີເດັກນ້ອຍຢູ່ທີ່ນັ້ນຫລືບໍ່ ກ່ອນທີ່ຈະໃຫ້ລົດຖອຍຫລັງ.
- ຢ່າໃຫ້ມີການໂຕ້ຖຽງເກີດຂຶ້ນກັບເພື່ອນບ້ານເປັນອັນຂາດ. ຖ້າທ່ານເກີດມີການໂຕ້ແຍ້ງໃດໆ ທີ່ທ່ານບໍ່ສາມາດລະງັບຢ່າງສງົບໄດ້, ໃຫ້ຕິດຕໍ່ເຈົ້າໜ້າທີ່.
- *ແຈ້ງການກະທຳທຸກແນວທີ່ເປັນຕາສົງສັຍໃຫ້ຕຳລວດປະຈຳທ້ອງຖິ່ນ ຫລືຍາມຮັກສາຄວາມໝັ້ນຄົງທີ່ປະຕິບັດໜ້າທີ່ຕາມສັນຍາພາຍໃນບໍລິເວັນຕ່າງໆ.*

*ປັບປຸງໃໝ່ເມື່ອວັນທີ 29 ກັນຍາ 2006*

FEMA

# ເຮືອນເຄື່ອນທີ່ : ຄວາມປອດພັຍ ແລະຄຳແນະນຳຕ່າງ ເພື່ອປ້ອງກັນອັກຄີພັຍ



**ສາຍດ່ວນຊ່ວຍຫລືອເຮືອນເຄື່ອນທີ່ FEMA:**

**888-294-2822**

Laotian

## ຄວາມປອດພັຍຂອງເຕົາໄຟ

- ໃຫ້ຈື່ຈຳໄວ້ວ່າ ປຸ່ມທີ່ໃຊ້ໃນການໃຊ້ງານເຕົາຂອງເຮືອນເຄື່ອນທີ່ອາດແຕກຕ່າງຈາກເຕົາອົບທັມມະດາໄດ້. ການເຕືອນຄວາມຈຳຂອງຜູ້ອາສັຍໃຫ້ຮູ້ຈັກວິທີໃຊ້ທີ່ຖືກຕ້ອງເປັນເລື່ອງທີ່ສຳຄັນ. ໃຫ້ຮູ້ຈັກວ່າປຸ່ມໃດແມ່ນປຸ່ມຈຸດໄຟແລະປຸ່ມໃດແມ່ນປຸ່ມຂອງແຜ່ນເຕົາໄຟ. ໝາຍເຫດ : FEMA ກຳລັງປ່ຽນປຸ່ມຈຸດໄຟເປັນປຸ່ມສີແດງ (ຕາມພາບຂ້າງລຸ່ມນີ້).



- ຖ້າແຜນເຕົາໄຟບໍ່ເລີ່ມທຳງານຫລັງຈາກໄດ້ບິດປຸ່ມຈຸດໄຟສອງສາມເທື່ອ, ໃຫ້ລໍຖ້າຢ່າງນ້ອຍ 30 ວິນາທີ ຫລືລະບາຍລົມພາຍໃນບໍລິເວັນກ່ອນທີ່ຈະພະຍາຍາມຈຸດແຜ່ນເຕົາໄຟນັ້ນອີກ. ຈຳໄວ້ : ຈະມີແກສໂພູພຜນຄ້າງໄວ້ເທິງເຕົາໄຟໃນກໍລະນີທີ່ທ່ານໄດ້ເປີດແຜ່ນເຕົາໄຟແລ້ວແຕ່ໄຟບໍ່ຕິດ. ຖ້າທ່ານໃຊ້ໄມ້ຂີດໄຟຫລືພະຍາຍາມຈຸດໄຟອີກດ້ວຍປຸ່ມຈຸດໄຟແກສນັ້ນອາດກໍ່ໃຫ້ເກີດການລະເບີດໄດ້.

- ຫ້າມຄົວອາຫານໂດຍບໍ່ມີການເບິ່ງແຍງດູແລ ທັງນີ້ແມ່ນແຕ່ຈະເປັນເວລານານພຽງບໍ່ຈັກນາທີກໍຕາມ. ຖ້າທ່ານຈຳເປັນຕ້ອງໄປໃສ, ໃຫ້ມອດແຜ່ນເຕົາໄຟໝົດທຸກໜ່ວຍກ່ອນອອກຈາກເຮືອນ.

- ສຳຫລັບເຮືອນເຄື່ອນທີ່ທ່ມີເຕົາໄຟຟ້າ, ຫາກກຳລັງງານທີ່ສົ່ງເຂົ້າໄປໃນເຮືອນເຄື່ອນທີ່ຂອງທ່ານຖືກຕັດ, ໃຫ້ຈຳໄວ້ວ່າແຜ່ນເຕົາໄຟຂອງເຕົາໄຟຂອງທ່ານອາດຍັງຕິດຢູ່. ຖ້າທ່ານອອກໄປໃສ ແລ້ວກຳລັງງານຕິດອີກ, ກໍຈະທຳໃຫ້ແຜ່ນເຕົາໄຟຂອງເຕົາໄຟຂອງທ່ານຮ້ອນອີກ ຖ້າທ່ານບໍ່ໄດ້ປິດໄຟກ່ອນ.

## ຄວາມປອດພັຍກ່ຽວກັບໄຟ

ທຸກປີ, ອັກຄີພັຍຈະເປັນເຫດໃຫ້ຄົນອາເມລິກັນເສັຽຊີວິດ 4,000 ຄົນ ແລະໄດ້ຮັບບາດເຈັບປະມານ 25,000 ຄົນ. ເຫດເກດໄຟໄໝ້ເຊັ່ນນີ້ຫລາຍລາຍຈະເກີດຂຶ້ນເນື່ອງຈາກການໃຊ້ງານຫລືບຳລຸງຮັກສາເຄື່ອງໃຊ້ໄຟຟ້າຢ່າງບໍ່ຖືກຕ້ອງ, ເຊັ່ນ ການໃຊ້ງານສາຍພວງເກີນອັດຕາທີ່ກຳໜົດ ຫລືຫສມົວຊັເຄື່ອງຄຳຄວາມອົບອູ່ນຊະນິດທີ່ວໄດ້ໃກ້ວັດຖຸທີ່ຕິດໄຟໄດ້ງ່າຍໂພດ, ເຊັ່ນ ເຄື່ອງນອນ, ເຄື່ອງເຮືອນ ແລະຜ້າກັ້ງ.

ຜູ້ສອບສວນການໄຟໄໝ້ໃນລະດັບລັຖ, ແວ້ວຣິຊ ແລະເມືອງ ຮວມທັງໜ່ວຍອາສາສມັກຕ່າງໆ ຢາກໃຫ້ທ່ານຮູ້ວ່າມີຂັ້ນຕອນງ່າຍໆ ທີ່ທ່ານອາດນຳໄປໃຊ້ໄດ້ໃນການປ້ອງກັນບໍ່ໃຫ້ມີການເສັຽຊີວິດຫລືສູນເສັຽຊັບສິນເກີດຂຶ້ນເນື່ອງຈາກການໄຟໄໝ້ໃນເຮືອນເຄື່ອນທີ່.

- ຫ້າມເຮັດການປ່ຽນແປງໃດໆ ໃນເຮືອນຊົ່ວຄາວຂອງທ່ານໂດຍບໍ່ໄດ້ຮັບຄວາມເຫັນຊອບຂອງ FEMA. ລະບົບແກສຖືກຕິດຕັ້ງໃຫ້ເໝາະສົມກັບກັບຂນາດຂອງຖັງໂພູພຜນໃນເຮືອນເຄື່ອນທີ່ຂອງທ່ານ. ຖ້າທ່ານຕິດຕັ້ງຖັງທີ່ໃຫຍ່ກວ່ານັ້ນ, ທ່ານອາດເຮັດໃຫ້ສາຍໂພູພຜນແລະເຄື່ອງຄວກຄຸມແກສທຳງານໜັກເກີນກຳໜົດໄດ້.

- ຫ້າມນຳຂອງເຫລວໄວໄຟ (ນ້ຳມັນເອດຊັງ, ນ້ຳມັນແກສ ໆລໆ) ເຂົ້າໄປໃນເຮືອນຂອງທ່ານ.

- ຫຳ້ມເດີນສາຍໄຟຊຶດຝາ, ໃຕ້ພົມ ແລະຕາມທາງເດີນ. ຈຳໄວ້, ເຕົ້າສຽບຂອງເຮືອນເຄື່ອນທີ່ຂອງທ່ານສາມາດລຳລຽງເຄື່ອງໄຟຟ້າພຽງຈຳນວນຈຳກັດcan, ຫ້າມໃຊ້ງານວົງຈອນໜັກໂພດ.

- ຫ້າດູດຢາເທິງບ່ອນນອນ. ຖ້າທ່ານຈະດູດຢາໃນເຮືອນເຄື່ອນທີ່, ຕ້ອງໃຊ້ທີ່ເຂັ່ຽກອກຢາທີ່ລອຶກແລະທຳດ້ວຍໂລຫະຫລືດິນເຜົາແລະໃຫ້ແນ່ໃຈວ່າກອກຢາມອດຢ່າງເຕັມທີ່ກ່ອນທີ່ຈະນຳໄປຂະຈັດຖິ້ມ.

- ຈົ່ງໃຫ້ແນ່ໃຈວ່າເຄື່ອງຈັບກວດຄວັນໄຟທຳງານຢູ່ ແລະກວດເຕືອນລະເທື່ອ. ຖ້າເຮັດການບໍ່ຖືກຕ້ອງ, ໃຫ້ໂທໃຫ້ FEMA ຊາບ.

- ຫ້າມຈຸດທຽນໃນເຮືອນເຄື່ອນທີ່ໂດຍບໍ່ມີການດູແລ.

## ແຜ່ນການປະຈຳຄອບຄົວ

- ໃຫ້ສະມາຊິກຄອບຄົວທຸກຄົນເຂົ້າມີສ່ວນໃນໃນການກຽມພ້ອມຂອງທ່ານ ເພື່ອໃຫ້ທຸກຄົນຫູ້ຈັກແຜນການ.

- ໃຫ້ກຳໜົດທາງຫລົບພັຍສອງເສັ້ນທາງ. ປ່ອງຢ້ຽມໃນເຮືອນເຄື່ອນທີ່ສາມາດຖອກໄດ້ແລະໃຫຍ່ພໍເພື່ອໃຫ້ຜູ້ຄົນສ່ວນຫລາຍສາມາດລອດອອກມາໄດ້. ໃຫ້ແນ່ໃຈວ່າຈະສາມາດເຂົ້າເຖິງແລະເປີດປ່ອງຢ້ຽມນັ້ນໄດ້ໃນກໍລະນີທີ່ທ່ານຈຳເປັນໜີຜ່ານທາງນັ້ນເມື່ອເກີດເຫດໄຟໄໝ້.

- ໃຫ້ປຶກສາຫາລືກັນແລະຕົກລົງກັນວ່າຈະເຮັດຫຍັງດີກັບສັດລ້ຽງໃນກໍລະນີທີ່ການໄຟໄໝ້ເກີດຂຶ້ນ.

- ເລືອກບ່ອນໃດບ່ອນນຶ່ງນອກເຮືອນທີ່ສະມາຊິກຄອບຄົວທຸກຄົນຈະຊຸມນຸມກັນຫລັງຈາກໄດ້ໜີໄຟ.

- ຖ້າໄຟລຸກລາມໃນເຮືອນເຂື່ອນທີ່ຂອງທ່ານ, ໃຫ້ຫົວຢູ່ຫ່າງຈາກພິດານເຊິ່ງເປັນບອນທີ່ຮ້ອນທີ່ສຸດ. ໝອບຕົວໃຫ້ຢູ່ທີ່ຕ່ຳແລະໜີອອກໄປ ຢ່າງໄວທີ່ສຸດເທົ່າທີ່ຈະໄວໄດ້.

- ຖ້າສາມາດທຳໄດ້, ປິດປະຕູເມື່ອອອກຈາກເຮືອນ ເພື່ອຊ່າຍໃຫ້ໄຟມອດຍ້ອນຂາດອອກຊີເຈນ.

- ໃຫ້ແນ່ໃຈວ່າສ່ວນນຶ່ງຂອງແຜນການຂອງທ່ານຮວມເຖິງການຮັກສາຜູ້ທີ່ຕ້ອງການຄວາມຊ່ວຍເຫລືອພິເສດ.

- ໃຫ້ຊອກຫາບ່ອນທີ່ຢູ່ໃກ້ທີ່ສຸດທີ່ທ່ານສາມາດໂທຫາ 911 ໄດ້ ແລະໃຫ້ສັນນິດຖານວ່າ ທ່ານຈະບໍ່ມີເຄື່ອງໂທຊະນິດມືຖືໄວ້ໃຫ້ໃຊ້ໃນການໂທດັ່ງກ່າວ.

- ໃຫ້ຝຶກຫັດຕາມແຜນການຫລົບພັຍນຳສະມາຊິກຄອບຄົວໝົດທຸກຄົນຮວມທັງການພາສັດລ້ຽງໃຫ້ໜີຈາກໄປ.

**ສາຍດ່ວນຊ່ວຍເຫລືອເຮືອນເຄື່ອນທີ່ FEMA 888-294-2822**